# ໂຮງຮຽນວັນອາທິດ

**ວັນອາທິດ ທີ 9 ເດືອນ ພຶສພາ 2021 (05-09-2021)**

**ຂ່າວສານ**

*ທ່ານຫາຂໍ້ມູນທີ່ເຊື່ອຖືໄດ້ຈາກບ່ອນໃດ?*

**ຈຸດສຳຄັນໃນບົດຮຽນ:** ພຣະເຢຊູໂຜດຜູ້ທີ່ວາງໃຈໃນພຣະອົງໃຫ້ພົ້ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ການເສີມສ້າງຄວາມສັມພັນທາງສື່ສານມວນຊົນກາຍເປັນບ່ອນທີ່ນິຍົມກັນ,ຈະເປັນຈັ່ງໃດຖ້າເພື່ອນຄົນນຶ່ງໃນບັນດາ "ເພື່ອນ"ເຫຼົ່ານັ້ນປະຕິເສດທີ່ຈະພົບໜ້າກັນ? ບົດບັນທຶກລາຍການທີວີຫຼາຍຊຸດສືບຫາຄວາມສັມພັນອອນໄລ໌. ຄວາມສົງສັຍເກີດຂຶ້ນວ່າຄົນທີບໍ່ຍອມພົບໜ້າ ຄົງບໍ່ແມ່ນຄົນຈິງຕາມທີ່ລາວທຳທ່າເປັນໃນເນັດ, ສະແດງວ່າຄົນສືບສວນກຳລັງຄົ້ນຫາຄວາມຈິງຢູ່. ໜ້າເສັຽດາຍ, ມີຫຼາຍກໍຣະນີອົກຫັກເພາະວ່າບຸກຄົນທີ່ຖືກຕົ້ມບໍ່ເຄີຍຄິດເລີຍວ່ານາງບໍ່ໄດ້ເປັນຄົນສຳຄັນແທ້ຈິງໃນຄວາມສັມພັນຕາມທີ່ນາງຝັນວ່າເປັນ.

ພວກເຮົາຢາກພົວພັນກັບຄົນທີ່ຮັກເຮົາແທ້ຈິງ. ມີຫຼາຍຄົນຮູ້ສຶກວ່າເຂົາບໍ່ປະສົບຜົນສຳເຣັດໃນຄວາມສັມພັນເຂົາເລີຍຫັນມາພົວພັນກັບຄົນອື່ນທາງອິນເຕີເນັດ. ບົດບັນທຶກນີ້ເປີດເຜີຍວ່າຄົນຕ້ອງການໄວ້ວາງໃຈຄົນທີ່ໃຫ້ຄຸນຄ່າເຂົາ. ການໄວ້ວາງໃຈແມ່ນປັດໃຈສຳຄັນຍິ່ງໃນສັງຄົມຂອງເຮົາ. ບົດບັນທຶກເປັນເຄື່ອງຊີ້ໃຫ້ເຫັນປົມດ້ອຍຂອງວັທນາທັມໃນການລັກລອບຂໍ້ມູນ, ການຄ້າມະນຸດ, ແລະການຕົ້ມຕູນ(scam).

ແບບນີ້ເອງວັທນາທັມຂອງເຮົາຈຶ່ງເປັນທີ່ຂາດຄວາມໄວ້ວາງໃຈຢ່າງຮ້າຍແຮງ, ແຕ່ຍັງດີທີ່ຍັງມີຜູ້ເປັນຄຳຕອບ. ພຣະອົງນັ້ນຊື່ວ່າພຣະເຢຊູ. ຄວາມສັມພັນກັບພຣະອົງເປັນທີ່ໄວ້ວາງໃຈໄດ້ສເມີ.

**ພຣະຄັມພີກ່າວວ່າແນວໃດ :** (ເບິ່ງ ຕາມຂໍ້ 1, 2, ແລະ 3,)

## ການສຶກສາພຣະຄັມພີ

**1. ໂຣມ 10:8ຂ-10.**

*8ຂ."ຖ້ອຍຄຳນັ້ນຢູ່ໃກ້ເຈົ້າຢູ່ໃນປາກແລະຢູ່ໃນໃຈຂອງເຈົ້າ" (ຄືຖ້ອຍຄຳທີ່ກ່າວດ້ວຍຄວາມເຊື່ອ ທີ່ພວກເຮົາປະກາດນັ້ນ.) 9.*
*ຄືວ່າຖ້າເຈົ້າຈະຮັບດ້ວຍປາກຂອງເຈົ້າວ່າ, "ພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ" ແລະເຊື່ອໃນຈິດໃຈວ່າພຣະເຈົ້າໄດ້ຊົງໂຜດບັນດານໃຫ້ພຣະອົງຊົງຄືນຂຶ້ນມາຈາກຕາຍແລ້ວເຈົ້າກໍຈະໄດ້ພົ້ນ. 10. ເຫດວ່າທີ່ມະນຸດໄດ້ເຊື່ອກໍເຊື່ອດ້ວຍໃຈຂອງຕົນຈຶ່ງໄດ້ຊົງຖືວ່າເປັນຄົນຊອບທັມ ແລະທີ່ໄດ້ຍອມຮັບກໍຍອມຮັບດ້ວຍປາກຈຶ່ງຖືກຊົງໂຜດໃຫ້ພົ້ນ.*

ພຣະເຈົ້າບໍ່ໄດ້ເຮັດໃຫ້ການຄົ້ນຫາ ແລະການປະສົບຄວາມພົ້ນຫຍຸ້ງຍາກສັບສົນ; ຄວາມພົ້ນຢູ່ໃກ້ເຮົາຢູ່ໃນປາກແລະຢູ່ໃນໃຈຂອງເຮົາ. ແລະສິ່ງທີ່ເຮົາຄວນເຮັດດ້ວຍປາກແລະໃຈຂອງເຮົາ ຈະເຫັນໄດ້ຈາກການກະທຳສອງຢ່າງພ້ອມກັນຄື:

***1.*** **ເຊື່ອໃນໃຈ.** ຄວາມເຊື່ອແມ່ນການເຊື່ອແລະການວາງໃຈໃນສິ່ງໃດສິ່ງນຶ່ງຫຼືຄົນໃດຄົນນຶ່ງ. ການວາງໃຈແມ່ນການເພິ່ງອີງຂອງເຮົາໃສ່ບົດບາດ, ຄວາມສາມາດ, ພລັງ, ຫຼືຄວາມຈິງຂອງສິ່ງຂອງຫຼືບຸກຄົນຜູ້ຊຶ່ງເຮົາປົງຄວາມເຊື່ອຂອງເຮົາໄວ້. ຄວາມພົ້ນຂອງເຮົາບໍ່ໄດ້ຂຶ້ນກັບສິ່ງທີ່ເຮົາເຮັດ, ແຕ່ມັນຮັບປະກັນດ້ວຍຄວາມເຊື່ອໃນສິ່ງພຣະເຢຊູໄດ້ຊົງກະທຳ. ຄວາມເຊື່ອເລິກເຊິ່ງກວ່າແລະຮັ່ງມີກວ່າ ການຮູ້ຈັກສິ່ງໃດສິ່ງນຶ່ງແທ້ຈິງ. ດັ່ງທີ່ທ່ານຢາໂກໂບກ່າວວ່າ, "*ຝ່າຍພວກເຈົ້າກໍເຊື່ອຕື້ວ່າ ມີພຣະເຈົ້າແຕ່ອົງດຽວນັ້ນກໍດີຢູ່ແລ້ວ ສ່ວນຜີຮ້າຍກໍເຊື່ອເໝືອນກັນ ແລະຢ້ານຈົນຕົວສັ່ນ (ຢາໂກໂບ 2:19).*" "ເຊື່ອດ້ວຍໃຈ" ແມ່ນການປົງຄວາມວາງໃຈແລະການເພິ່ງພາທັງໝົດຂອງເຮົາໃສ່ສິ່ງທີ່ເຮົາເຊື່ອ. ໂດຍທາງຄວາມເຊື່ອຂອງເຮົາໃນພຣະເຢຊູ, ພວກເຮົາເຊື່ອແລະຮັບພຣະອົງເປັນພຣະຜູ້ໂຜດໃຫ້ພົ້ນຂອງເຮົາ, ເຄື່ອງບູຊາຊຳຣະລ້າງບາບທີ່ສົມບູນໂດຍທາງການຕາຍແລະການຄືນພຣະຊົນຂອງພຣະອົງ. ການຄືນພຣະຊົນຂອງພຣະອົງເປັນເຄື່ອງຢືນຢັນການຖວາຍບູຊາແທນຄວາມຄວາມບາບຂອງເຮົາ. ພຣະເຢ

ຊູຊະນະຄວາມຕາຍ, ແລະພຣະອົງໄດ້ຈັດແຈງທາງຄືນດີກັບພຣະເຈົ້າແກ່ເຮົາ. ນີ້ແມ່ນຂ່າວປະເສີດທີ່ເຮົາເຊື່ອໃນໃຈຂອງເຮົາ.

2. **ຮັບດ້ວຍປາກຂອງເຈົ້າ.** ພວກເຮົາຢືນຢັນຄວາມເຊື່ອຂອງເຮົາໃນຂ່າວປະເສີດແລະການເປັນພຣະຜູ້ເປັນເຈົ້າຂອງພຣະຄຣິດດ້ວຍການຮັບດ້ວຍປາກຂອງເຮົາ. ການຮັບພຣະເຢຊູເປັນອົງພຣະຜູ້ເປັນເຈົ້າແມ່ນການແຍກພຣະອົງອອກຈາກສິ່ງອື່ນຫຼືຄົນອື່ນໆໄວ້ຕ່າງຫາກ. ບໍ່ມີພຣະເຈົ້າອື່ນ; ມີແຕ່ພຣະເຢຊູພຽງອົງດຽວຊົງເປັນອົງພຣະຜູ້ເປັນເຈົ້າ. ພວກເຮົາຊາບວ່າພຣະເຢຊູໄດ້ຖວາຍຕົນເອງເປັນຄ່າໄຖ່ສຳລັບຄວາມພົ້ນຂອງເຮົາທັງຫຼາຍ, ເຫດສັນນັ້ນ ຊີວິດຂອງເຮົາຈຶ່ງບໍ່ເປັນຂອງເຮົາອີກຕໍ່ໄປ. ໃນ ເມື່ອພຣະອົງເປັນຜູ້ໄຖ່, ພຣະອົງຈຶ່ງເປັນອົງພຣະຜູ້ເປັນເຈົ້າແລະ ເປັນເຈົ້ານາຍ, ຊຶ່ງມີຣິດອຳນາດແລະມີສິດເໜືອເຮົາທັງໝົດ.

| |
|---|
| *ມີອຸປສັກຫຍັງແດ່ທີ່ຈະຍອມຮັບພຣະເຢຊູເປັນອົງພຣະຜູ້ເປັນເຈົ້າ?* |

ຄວາມເຊື່ອພາຍໃນແລະກາຍພາຍນອກຂອງເຮົາເດີນໄປພ້ອມໆກັນ; ເປັນເໝືອນສອງດ້ານທີ່ຢູ່ໃນຫຼຽນດຽວກັນ. ໜ້າສົນໃຈຢ່າງຍິ່ງ, ໃນຂໍ້ 9, ທ່ານໂປໂລອອກຄຳສັ່ງໃຫ້ກະທຳ: "ຮັບ"ແລະ"ເຊື່ອ"; ແຕ່ວ່າ, ໃນຂໍ້ 10, ເພິ່ນປີ້ນກັບ: "ເຊື່ອ" ແລະ "ຮັບ".ຜົນຂອງການຮັບແລະເຊື່ອ (ຫຼືຂອງການເຊື່ອແລະການຮັບ) ແມ່ນຄວາມພົ້ນແລະ ຄວາມຊອບທັມ. ພຣະເຢຊູໂຜດເຮົາໃຫ້ພົ້ນໂດຍການຍົກເລີກຄວາມຜິດບາບຂອງເຮົາແລ້ວຄວາມຊອບທັມຂອງພຣະອົງຈຶ່ງເປັນຂອງເຮົາ. ພຣະເຢຊູເປັນຄວາມຊອບທັມຂອງເຮົາແລະພຣະອົງເຮັດໃຫ້ເຮົາເປັນຄົນຊອບທັມ (ໂຣມ 5:19). ປາສຈາກການກັບຄືນຫາພຣະເຢຊູດ້ວຍໃຈເຊື່ອ, ພວກ ເຮົາກໍບໍ່ອາດຮັບດ້ວຍປາກຂອງເຮົາຢ່າງສັດຊື່. ການເຊື່ອແລະການຮັບນຳເຮົາສູ່ຄວາມຊອບທັມແລະສູ່ຫຼັກຖານຄວາມພົ້ນຂອງເຮົາ. ການຮັບເຊື່ອຂອງເຮົາຢືນຢັນວ່າພຣະເຢຊູເປັນພຣະເຈົ້າແລະມີສິດອຳນາດເໜືອຊີວິດແລະຄວາມຕາຍ. ປາສຈາກການຍອມຮັບນີ້ແລ້ວພວກເຮົາກໍບໍ່ມີຄວາມພົ້ນ ຫຼືຄວາມຊອບທັມໃດໆທັງສິ້ນ. ດັ່ງນັ້ນ ພຣະເຈົ້າຈຶ່ງໄດ້ເຜີຍພຣະອົງໃນການຊົງສ້າງແລະຫຼາຍຄົນໄດ້ເຊື່ອໃນການເປັນຢູ່ຂອງພຣະອົງ, ຄວາມເຊື່ອທີ່ໃຫ້ພົ້ນພົບໄດ້ໃນຄວາມເຊື່ອແລະການຮັບເອົາພຣະຄຣິດຜູ້ຊົງເປັນຄືນມາເທົ່ານັ້ນ.

## 2. <u>ໂຣມ 10:11-13.</u>

*[11] ເພາະຂໍ້ພຣະທັມຄັມພີກ່າວໄວ້ວ່າ, "ບຸກຄົນໃດທີ່ເຊື່ອໃນພຣະອົງຈະບໍ່ໄດ້ຮັບຄວາມອັບອາຍ." [12] ເຫດວ່າພວກຢິວແລະພວກຕ່າງຊາດນັ້ນ ພຣະເຈົ້າບໍ່ຊົງຖືວ່າຕ່າງກັນ ດ້ວຍວ່າອົງພຣະຜູ້ເປັນເຈົ້າອົງດຽວຊົງເປັນອົງພຣະຜູ້ເປັນເຈົ້າຂອງຄົນທັງປວງແລະຊົງໂຜດຢ່າງບໍຣິບູນແກ່ຄົນທັງປວງທີ່ທູນຂໍຕໍ່ພຣະອົງ. [13] ເພາະວ່າ, "ທຸກຄົນທີ່ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າກໍຈະໄດ້ພົ້ນ."*

ພຣະທັມຂ່າວປະເສີດບໍ່ມີໄວ້ສຳລັບສະໂມສອນສັງຄົມຊັ້ນສູງ, ບ່ອນທີ່ພຣະເຈົ້າເຊີນພວກທີ່ເໝາະສົມມາເປັນສະມາຊິກສະໂມສອນແຫ່ງນີ້ຕ້ອງຫວ່າງເປົ່າແນ່ ເພາະພວກເຮົາບໍ່ມີໃຜເໝາະສົມ. ສິ່ງທີ່ທ່ານໂປໂລຊີ້ໃນຫົວບົດຂອງພຣະທັມໂຣມ: ບໍ່ວ່າເຮົາຄິດວ່າເຮົາຈະດີ ຫຼື ຊົ່ວພຽງໃດ, ເຮົາທຸກຄົນກໍເປັນຄົນບາບ ແລະບໍ່ເໝາະສົມທັງນັ້ນ (ໂຣມ 3:23). ແຕ່ຄຸນຄວາມດີຂອງຂ່າວປະເສີດມີຢູ່ວ່າ, ພວກເຮົາທຸກຄົນເປັນຄົນບາບບໍ່ສົມຄວນກໍຕາມ, ພວກເຮົາທຸກຄົນມີໂອກາດເຊື່ອແລະຮັບເອົາຂ່າວປະເສີດທັງນັ້ນ; ເຮົາທຸກຄົນ-ບໍ່ວ່າຈະເປັນເຜົ່າພັນໃດຫຼືເບື້ອງຫຼັງໃດ. ຄຣິສຕຽນແຕ່ກ່ອນລະນຶກຄວາມຈິງນີ້ໄດ້ຊ້າ. ແຕ່ພຣະ ທັມກິຈການໄດ້ບັນຈຸຄຳເຕືອນໄວ້ຊ້ຳແລ້ວຊ້ຳເຫຼົ່າເຖິງຄວາມຈິງນີ້. ເວລາພຣະເຢຊູຢ້ຳເຕືອນສາວົກຂອງພຣະອົງເຣື່ອງຄຳສັນຍາວ່າດ້ວຍພຣະວິນຍານບໍຣິສຸດ, ພຣະອົງໄດ້ບອກເຂົາວ່າ, *"ແຕ່ທ່ານທັງຫຼາຍຈະໄດ້ຮັບພຣະຣາຊທານຣິດເດດ ເມື່ອພຣະວິນຍານບໍຣິສຸດຈະສະເດັດມາເຖິງພວກທ່ານແລະພວກທ່ານຈະເປັນພຍານຝ່າຍເຮົາໃນກຸງເຢຣູຊາເລັມ, ຕລອດທົ່ວແຂວງຢູດາຍ, ກັບແຂວງຊາມາເຣັຽ, ແລະຈົນ ເຖິງທີ່ສຸດປາຍແຜ່ນດິນໂລກ" (ກິຈການ 1:8).* ພຣະວິນຍານບໍຣິສຸດຈະປະທານຣິດເດດແກ່ສາວົກ ເພື່ອນຳຂ່າວປະເສີດໄປປະກາດ ຕັ້ງແຕ່ກຸງເຢຣູຊາເລັມ, ບ່ອນທີ່ມີພຽງແຕ່ວັທນາທັມຢິວ, ຫາຢູດາຍທີ່ຕັ້ງເຢຣູຊາເລັມ, ຫາຊາມາເຣັຽຈຸດເລີ່ມຕົ້ນດິນແດນຂອງຊາວຕ່າງຊາດ; ຈົນເຖິງທີ່ສຸດປາຍແຜ່ນດິນໂລກ, ຊຶ່ງລວມເຖິງທຸກຄົນ.

ພວກເຮົາກໍໄດ້ເຫັນສິ່ງນີ້ໃນພາກທີນຶ່ງດ້ວຍພຣະມະຫາບັນຊາຊຶ່ງພຣະເຢຊູໄດ້ປະທານແກ່ເຮົາ. ພຣະເຢຊູໄດ້ສັ່ງໃຫ້ "ເຮັດໃຫ້ຄົນທຸກຊາດເປັນລູກສິດ" (ມັດທາຍ 28:19) ຊຶ່ງສອດຄ່ອງກັບ (ໂຣມ10:13): *"ເພາະວ່າ,"ທຸກຄົນທີ່ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າກໍຈະພົ້ນ."*

ຂໍ້ພຣະທັມເຫຼົ່ານີ້ຮັບປະກັນຄວາມປາຖນາຂອງພຣະເຈົ້າໃຫ້ເຮົາເຊີນທຸກຄົນມາເຊື່ອໃນພຣະອົງ "ຕາມທີ່ພຣະຄັມພີໄດ້ກ່າວວ່າ: *"ບຸກຄົນໃດທີ່ເຊື່ອໃນພຣະອົງຈະບໍ່ໄດ້ຮັບຄວາມອັບອາຍ"(ຂໍ້11).* ຄວາມອັບອາຍແມ່ນຄວາມຮູ້ສຶກເຈັບປວດທີ່ເຮົາຮູ້ສຶກເມື່ອພວກ

ເຮົາສຳນຶກໃນຄວາມບາບແລະສິ່ງທີ່ເຮົາໄດ້ເຮັດຜິດ. ພວກເຮົານຳຄວາມອັບອາຍມາສູ່ຕົວເຮົາເອງແລ້ວພວກເຮົາກໍຮູ້ສຶກລະອາຍ. ອາດາມແລະເອວາບໍ່ຮູ້ສຶກລະອາຍ (ປະຖົມການ 2:25) ຈົນກະທັ້ງເຂົາໄດ້ເຮັດບາບຕໍ່ສູ້ພຣະເຈົ້າ-ແລະຄວາມອາຍຕໍ່ບາບກໍຕິດຕົວເຮົາແຕ່ນັ້ນມາ. ແຕ່ ຂອງພຣະຣາຊທານໄດ້ປົດປ່ອຍເຮົາຈາກຄວາມບາບຂອງເຮົາ. ເມື່ອພວກເຮົາໄດ້ເຊື່ອແລະວາງໃຈໃນຄວາມຕາຍຂອງພຣະເຢຊູ, ຜູ້ໄດ້ຮັບໂທດແລະຄວາມອາຍໂດຍພຣະອົງເອງແທນເຮົາ. ນີ້ໝາຍຄວາມວ່າ, ເມື່ອຜູ້ເຊື່ອນຳພຣະມະຫາບັນຊາອອກໄປ, ພວກເຮົາຄວນໄດ້ຮັບການດົນໃຈໃຫ້ປະກາດຂ່າວປະເສີດກັບບຸກຄົນຫຼືທຸກຄົນທີ່ພວກເຮົາຜ່ານທາງໄປ.

| |
|---|
| *ມັນມີຄວາມໝາຍຫຍັງໃນການຍອມຮັບພຣະເຢຊູເປັນອົງພຣະຜູ້ເປັນເຈົ້າ?* |

### 3. <u>ໂຣມ 10:14-17</u>.

*[14]ແຕ່ ຜູ້ທີ່ຍັງບໍ່ໄດ້ເຊື່ອໃນພຣະອົງນັ້ນ ເຂົາຈະທູນຂໍຕໍ່ພຣະອົງໄດ້ຢ່າງໃດ ແລະ ຜູ້ທີ່ຍັງບໍ່ໄດ້ຍິນເຖິງເຣື່ອງພຣະອົງນັ້ນ ຈະເຊື່ອໃນພຣະອົງໄດ້ຢ່າງໃດ ແລະເມື່ອບໍ່ມີຜູ້ໃດປະກາດໃຫ້ເຂົາຟັງ ເຂົາຈະໄດ້ຍິນເຖິງເຣື່ອງພຣະອົງໄດ້ຢ່າງໃດ. [15]ແລະຖ້າບໍ່ມີໃຜໃຊ້ເຂົາໄປ ເຂົາຈະປະກາດໄດ້ຢ່າງໃດ ດັ່ງມີຂຽນໄວ້ໃນພຣະຄັມພີແລ້ວວ່າ,"ຕີນຂອງພວກຄົນທີ່ນຳຂ່າວດີມາກໍງົດງາມປານໃດໜໍ."*
*[16]ແຕ່ບໍ່ແມ່ນທຸກຄົນໄດ້ເຊື່ອຟັງຂ່າວປະເສີດນັ້ນ ເພາະເອຊາຢາໄດ້ກ່າວໄວ້ວ່າ "ພຣະອົງເຈົ້າເອີຍ, ມີໃຜແດ່ໜໍໄດ້ເຊື່ອຟັງຕາມທີ່ເຂົາໄດ້ຍິນຈາກພວກເຮົານັ້ນ." [17]ດັ່ງນັ້ນຄວາມເຊື່ອເກີດຂຶ້ນໄດ້ກໍເພາະການໄດ້ຍິນ ແລະການໄດ້ຍິນເກີດຂຶ້ນໄດ້ກໍເພາະການປະກາດເຣື່ອງພຣະຄຣິດ.*

ພຣະສັນຍາຄວາມພົ້ນຂອງພຣະອົງງົດງາມພຽງໃດໜໍ, ມັນບໍ່ອາດເກີດຂຶ້ນໄດ້ດ້ວຍການຢູ່ຊື່ໆ. ຕ້ອງມີຄົນປະກາດຂ່າວດີວ່າການຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າຈະນຳໄປສູ່ຄວາມພົ້ນ. ເລີ່ມຈາກຈຸດຄວາມພົ້ນ, ທ່ານໂປໂລພາເຮົາຍ່າງຖອຍຫຼັງເພື່ອໃຫ້ເຫັນວ່າມີຫຼັງກ່ຽວຂ້ອງແນ່ ແລະແມ່ນໃຜເປັນຜູ້ເລີ່ມຕົ້ນຂັ້ນຕອນທັງໝົດນີ້ກໍເລີ່ມຕົ້ນດ້ວຍພຣະເຈົ້າເອງ.

| |
|---|
| *ຂໍ້ພຣະຄັມພີເຫຼົ່ານີ້ສອນຫຍັງເຮົາກ່ຽວກັບພຣະລັກສນະຂອງພຣະເຈົ້າ?* |

ຄົນມັກໃຊ້ຄວາມແຕກຕ່າງຂອງເຈຕນາລົມເພື່ອເຜີຍແຜ່ຂ່າວປະເສີດຄວາມພົ້ນ, ແຕ່ຊ້ຽວລົງສູ່ເນື້ອຫາສຳຄັນອັນດຽວຄື: ຜູ້ຜູ້ນຶ່ງບອກຄົນອື່ນ. ເມື່ອພວກເຮົາຍອມຮັບແລະຮັບເອົາຂ່າວປະເສີດ, ພວກເຮົາກໍໄດ້ຮັບຜົນຂອງຂ່າວປະເສີດທັງສອງຢ່າງພ້ອມກັນ-ຊີວິດທີ່ໄດ້ການອະພັຍແລະການເສີມສ້າງໃໝ່ຢ່າງເຕັມປ່ຽມສູ່ຄວາມສັມພັນກັບພຣະເຈົ້າ-ແລະຄວາມຮູ້ສຶກເປັນກຽດໃນການແບ່ງປັນຂອງປະທານອັນດຽວກັນນັ້ນກັບຄົນອື່ນ.

ຄວາມພົ້ນບໍ່ແມ່ນໄດ້ມາຢ່າງອັຕໂນມັດ. ພຽງແຕ່ບາງຄົນໄດ້ຍິນຂ່າວປະເສີດບໍ່ໝາຍຄວາມວ່າລາວໄດ້ພົ້ນຢ່າງອັຕໂນມັດ. ຈະພົ້ນໄດ້ກໍຕໍ່ເມື່ອຜູ້ທີ່ໄດ້ຍິນແທ້-ຮັບເອົາຂ່າວປະເສີດທີ່ລາວໄດ້ຍິນລົງໃນໃຈ-ຜູ້ໄດ້ຍິນ. ຄວາມກ່ຽວພັນກັນຣະຫວ່າງການໄດ້ຍິນແລະການເຊື່ອເຊື່ອຟັງຈະເຫັນໄດ້ໃນຂໍ້ 16: *"ບໍ່ແມ່ນທຸກຄົນໄດ້ເຊື່ອຟັງຂ່າວປະເສີດນັ້ນ." (ຂໍ້ 16).*

ບໍ່ແມ່ນທຸກຄົນຈະຮັບເອົາຂ່າວປະເສີດ, ແຕ່ຜູ້ທີ່ເຊື່ອຈະຮູ້ບຸນຄຸນຕລອດໄປນຳຜູ້ນຳຂ່າວປະເສີດມາໃຫ້ເຂົາ. ພວກເຮົາເປັນຜູ້ສົ່ງຂ່າວແຫ່ງຊີວິດມາໃຫ້ເຂົາ. ສອງສິ່ງຄວນດົນໃຈເຮົາຄື:

1. **ຄວາມກະຕັນຍູ.** ພວກເຮົາສະແດງຄວາມຮູ້ບຸນຄຸນຕໍ່ພຣະເຈົ້າສຳລັບຄວາມພົ້ນທີ່ເຮົາມີໂດຍທາງພຣະຄຣິດໂດຍການແບ່ງປັນຂ່າວປະເສີດຄວາມພົ້ນໃຫ້ຄົນອື່ນຟັງ. ພວກເຮົາອາດຮູ້ສຶກເຖິງບຸນຄຸນທີ່ພຣະເຈົ້າໄດ້ໃຊ້ຄົນອື່ນເວົ້າຂ່າວປະເສີດເຣື່ອງພຣະເຢຊູໃຫ້ເຮົາຟັງ.
2. **ຄວາມຮັກ.** ທຳນອງດຽວກັບພຣະເຈົ້າໄດ້ຊົງຮັກທ່ານ, ພວກເຮົາສາມາດເປັນທໍ່ຄວາມຮັກຂອງພຣະເຈົ້າໄຫຼໄປສູ່ຄົນອື່ນ. ພວກເຮົາໄດ້ຮັບຜົນປໂຍດຈາກຄວາມຮັກຂອງພຣະອົງ, ແລະຄວາມຮັກນັ້ນນຳພາເຮົາຮັກຄົນອື່ນ. "ພວກເຮົາທັງຫຼາຍໄດ້ຮັກ ເພາະພຣະອົງໄດ້ຊົງຮັກເຮົາກ່ອນ" (1ໂຢຮັນ 4:19).

| |
|---|
| *ມີທາງໃດແດ່ທີ່ກຸ່ມຂອງພວກເຮົາສາມາດເຮັດຮ່ວມກັນເພື່ອແບ່ງປັນຂ່າວປະເສີດ?* |

**ນຳໃຊ້ໃນຊີວິດ**

ທ່ານຈະເຮັດຫຍັງໃນອາທິດນີ້ກັບຂ່າວຄວາມພົ້ນ? ຈົ່ງເລືອກການນຳໃຊ້ຂໍ້ໃດຂໍ້ນຶ່ງຕໍ່ລົງໄປນີ້:

- **ສະທ້ອນ.** ຈົ່ງສະທ້ອນຜູ້ທີ່ໄດ້ຫຸ້ມເທໃສ່ຄວາມພົ້ນຂອງທ່ານແລະຈົ່ງພິຈາຣະນາສິ່ງທີ່ເຂົາໄດ້ເຮັດຊຶ່ງພາໃຫ້ທ່ານຮັບເອົາຂ່າວປະເສີດທີ່ເຂົາແບ່ງປັນນັ້ນ? ຈົ່ງຈົດບັນຊີໃນທາງທີ່ທ່ານສາມາດເຮັດບາງສິ່ງທີ່ຄ້າຍຄືກັນສຳລັບຄົນອື່ນ.
- **ຂຽນ.** ຈົ່ງຈົດບັນທຶກ ຫຼືໂທຫາບຸກຄົນທີ່ຈະມີບົດບາດໃນຄວາມເຊື່ອພຣະຄິດເທື່ອໜ້າ. ຂອບໃຈຄວາມຮັກແລະການເຊື່ອຟັງໃນການແບ່ງປັນຂ່າວປະເສີດນຳທ່ານ.
- **ແບ່ງປັນ.** ຈົ່ງອະທິຖານຫາຜູ້ທີ່ພຣະເຈົ້າໄດ້ວາງໄວ້ໃນທາງຂອງທ່ານ. ຈົ່ງຊອກຫາໂອກາດແບ່ງປັນຂ່າວເຣື່ອງພຣະຄຣິດໃຫ້ເຂົາຟັງ. ຈົ່ງໃຫ້ພຣະເຈົ້າປະທານຣິດອຳນາດແກ່ທ່ານເພື່ອເປັນເຄື່ອງມືນຳຄົນອື່ນມາສູ່ຄວາມຮູ້ເຣື່ອງຄວາມພົ້ນຂອງພຣະອົງ.

ພວກເຮົາບາງຄົນ ມີຄວາມຍາກລຳບາກໃນການຜູກພັນກັບຄົນແລະວາງໃຈເຂົາກວ່າຄົນອື່ນ. ແຕ່ມີຜູ້ນຶ່ງທີ່ເຮົາວາງໃຈໄດ້ທີ່ສຸດ.ພວກເຮົາສາມາດໄວ້ວາງໃຈໃນພຣະອົງໄດ້.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PSI**